**ບົດຖະແຫຼງຂ່າວ**

**ຂອງຄະນະສະເພາະກິດ ເພື່ອປ້ອງກັນ ຄວບຄຸມ ແລະ ແກ້ໄຂ ພະຍາດອັກເສບປອດທີ່ເກີດ**

**ຈາກເຊື້ອຈຸລະໂລກສາຍພັນໃໝ່ COVID-19**

**ປະຈໍາວັນອັງຄານ ວັນທີ 7 ກັນຍາ ປີ 2021**

ສະບາຍດີ ບັນດາທ່ານທີ່ກໍາລັງຕິດຕາມຮັບຊົມ ແລະ ຮັບຟັງ ການຖ່າຍທອດສົດ ການຖະແຫຼງຂ່າວຂອງຄະນະສະເພາະກິດ **ປະຈໍາວັນອັງຄານ ວັນທີ 7 ກັນຍາ ປີ 2021**.

- ຂ້າພະເຈົ້າ ດຣ. ຣັດຕະນະໄຊ ເພັດສຸວັນ ຫົວໜ້າກົມຄວບຄຸມພະຍາດຕິດຕໍ່, ກະຊວງສາທາລະນະສຸກ ຈະຖະແຫຼງຂ່າວ ກ່ຽວກັບ ສະພາບໂຄວິດ-19 ຢູ່ໃນ ສປປ ລາວ, ໃນໂລກ ແລະ ບາງຂໍ້ແນະນໍາເພີ່ມເຕີມ.

**ຕໍ່ໄປ ຂ້າພະເຈົ້າ ຂໍລາຍງານ:**

❖ **ສະພາບການລະບາດພະຍາດໂຄວິດ-19 ຢູ່ ສປປ ລາວ, ມາຮອດວັນທີ 6 ກັນຍາ 2021:**

ໄດ້ກວດວິເຄາະທັງໝົດ **4,159** ຄົນ, ໃນນັ້ນ ກວດພົບຜູ້ຕິດເຊື້ອໃໝ່ ທັງໝົດ **307** ຄົນ ເຊິ່ງ**ຕິດເຊື້ອໃນຊຸມຊົນ 86 ຄົນ** ເປັນຜູ້ສຳຜັດໃກ້ຊິດນຳຜູ້ຕິດເຊື້ອທີ່ຜ່ານມາ ແລະ **ກໍລະນີນຳເຂົ້າ ມີ 221 ຄົນ** ຈາກ ສະຫວັນນະເຂດ 195 ຄົນ, ຈຳປາສັກ 14 ຄົນ, ສາລະວັນ 10 ຄົນ ແລະ ຄຳມ່ວນ 2 ຄົນ. ເຊິ່ງກວດພົບຈາກແຮງງານລາວ ຫຼື ຜູ້ທີ່ເດີນທາງມາຈາກປະເທດເພື່ອນບ້ານ ເຂົ້າຕາມຈຸດຜ່ານແດນສາກົນ.

**ລາຍລະອຽດ ຜູ້ຕິດເຊື້ອໃນຊຸມຊົນ ຢູ່ນະຄອນຫຼວງວຽງຈັນ ແລະ ບັນດາແຂວງແມ່ນເປັນຜູ້ສຳຜັດໃກ້ຊິດກັບຜູ້ຕິດເຊື້ອທີ່ຜ່ານມາ ລາຍລະອຽດດັ່ງນີ້:**

- **ຄໍາມ່ວນ 29 ຄົນ**: ແພດທີ່ຈໍາກັດບໍລະເວນ  2 ຄົນ,    ຊຸມຊົນໂພນສະຫວ່າງ  8 ຄົນ, ຕະຫລາດຫລັກ3:  1 ຄົນ,   ຄອບຄົວໄຟຟ້າ: 3 ຄົນ,  ໂຮງຮຽນ ການເມືອງ: 5 ຄົນ ແລະ ຊຸມຊົນອື່ນໆ 10 ຄົນ.
- **ສະຫວັນນະເຂດ 26 ຄົນ:** ສະຫ້ອນ ປາກ 2 ກໍລະນີ, ພະນັກງານຫ້ອງການກຸ່ມ 2 ກໍລະນີ ແລະ ຄອບຄົວພະນັກງານກຸ່ມ 1 ກໍລະນີ , ສ່ວນທີ່ເຫຼືອແມ່ນສໍາຜັດກັບກໍລະນີຕິດເຊື້ອທີ່ຜ່ານມາ ແລະ ອີກສ່ວນທີ່ເຫຼືອທີມງານລະບາດກໍາລັງສອບສວນ ແລະ ເກັບກໍາຂໍ້ມູນເພີ່ມເຕີມ.
- **ບໍແກ້ວ 13 ຄົນ:**  ເຂດເສດຖະກິດພິເສດ ສາມຫຼ່ຽມຄໍາ 11 ຄົນ (ຕໍາຫລວດ 02, ຄົນຈີນ 09), 01 ຈາກ ບ້ານຂອນແກ້ວ ເມືອງຫ້ວຍຊາຍ

- **ຈຳປາສັກ 10 ຄົນ: ມາຈາກຊຸມຊົນ ເຂດ ຫລັກ 40 ກ່ຽວພັນກັບ ກຸ່ມໂຮງໝໍ ເມືອງ ປະທຸມພອນ.**

- **ສາລະວັນ 4 ຄົນ**: ແມ່ນ ກຸ່ມ ທີ່ພົວພັນ ກັບ ເຈົ້າໜ້າທີ່ ໄອຍະການ ແລະ ຫ້ອງການ ຍຸດທິທຳແຂວງ ທີ່ເຄີຍໄດ້ ລາຍງານໃນ ສອງວັນຜ່ານມາ

- **ຫຼວງນ້ຳທາ 2 ຄົນ:** ຈາກບ້ານວຽງເງິນ, ເມືອງນ້ຳທາ ພົວພັນ ກັບ ຜູ້ຕິດເຊື້ອ ຜ່ານມາ ຈາກບ້ານທົ່ງໄຈ້ເໜືອ, ເມືອງນ້ຳທາ.

- **ນະຄອນຫຼວງວຽງຈັນ 1 ຄົນ: ບ້ານ ດອນດູ່ ເມືອງ ຫາດຊາຍຟອງ ເປັນລູກ ຂອງຜູ້ ທີ່ ຕິດເຊື້ອ ຊຶ່ງໄດ້ລາຍງານ ໄລຍະວັນທີ 24 ສິງຫາ ຜ່ານມາ**

- **ຫຼວງພະບາງ 1 ຄົນ:** ແມ່ນຜູ້ສຳຜັດໃກ້ຊິດກັບຜູ້ຕິດເຊື້ອມາກ່ອນ

- ❖ **ສະຖານທີ່ສ່ຽງ ທີ່ຜູ້ຕິດເຊື້ອໄດ້ເດີນທາງໄປໃນນະຄອນຫຼວງ:**
  - ○

- ➢ ປະຈຸບັນ ຜູ້ຕິດເຊື້ອໃໝ່ທັງໝົດ ໄດ້ເຂົ້ານອນແຍກປ່ຽວ ແລະ ຮັບການປິ່ນປົວຢູ່ສະຖານທີ່ປິ່ນປົວທີ່ຖືກກຳນົດໄວ້.

- ➢ ມາຮອດມື້ນີ້ ພວກເຮົາມີຕົວເລກຜູ້ຕິດເຊື້ອສະສົມທັງໝົດ **16,365 ຄົນ**, ເສຍຊີວິດສະສົມ **16** ຄົນ ແລະ ຄົນເຈັບກຳລັງປິ່ນປົວ ທັງໝົດ **5.019** ຄົນ.

- ➢ **ສຳລັບ ບ້ານແດງທີ່ຖືກກຳນົດເປັນບ້ານແດງໃໝ່ໃນນະຄອນຫຼວງວຽງຈັນ ມີ 0 ບ້ານຄື:**

- ຜູ້ທີ່ມີຈຸດປະສົງຢາກກວດຊອກຫາເຊື້ອໂຄວິດ-19 ສຳລັບ ນະຄອນຫຼວງວຽງຈັນນີ້ແມ່ນ **ຢູ່ຈຸດເກັບຕົວຢ່າງບຶງຂະຫຍອງ** ເຊິ່ງເປີດໃຫ້ບໍລິການບັນດາທ່ານທຸກວັນ (ວັນຈັນ ຫາ ວັນອາທິດ) ໃນຕອນເຊົ້າ ເວລາ 9:00-12:00 ໂມງ ແລະ ຍັງມີທີມງານເກັບຕົວຢ່າງເຄື່ອນທີ່ໄປເກັບໃນສະຖານທີ່ທີ່ມີລາຍງານຄົນເຈັບຕິດເຊື້ອ.
- ສຳລັບແຂວງ ແມ່ນທ່ານສາມາດໄປກວດຊອກຫາເຊື້ອໄດ້ຢູ່ໂຮງໝໍແຂວງ ຫຼືສະຖານທີ່ທີ່ກຳນົດໄວ້.

## ➢ ການເຝົ້າລະວັງຢູ່ຕາມຈຸດຜ່ານແດນ ໃນຂອບເຂດທົ່ວປະເທດ

- ວັນທີ 6 ກັນຍາ 2021 ມີຜູ້ເດີນທາງຜ່ານເຂົ້າມາດ່ານຕ່າງໆໃນ ສປປ ລາວ ຈຳນວນ ທັງໝົດ **1,814** ຄົນ.

- ປັດຈຸບັນ ທົ່ວປະເທດມີສູນຈຳກັດບໍລິເວນທີ່ຍັງເປີດຢູ່ **90** ສູນ ແລະ **54** ໂຮງແຮມ , ມີຜູ້ຈຳກັດບໍລິເວນ **8,438** ຄົນ.

➢ **ຕໍ່ໄປນີ້ ຂ້າພະເຈົ້າຂໍລາຍງານສະພາບການຕິດເຊື້ອໃນທົ່ວໂລກ:**

- ປັດຈຸບັນ ທົ່ວໂລກມີລາຍງານຜູ້ຕິດເຊື້ອສະສົມທັງໝົດ 221,935,770 (381,713 ໃໝ່), ເສຍຊີວິດທັງໝົດ 4,587,847 (6,240 ໃໝ່), ປິ່ນປົວຫາຍດີ 198,527,247 (473,152 ໃໝ່). ສຳລັບ 3 ອັນດັບ ປະເທດທີ່ມີຜູ້ຕິດເຊື້ອ ແລະ ເສຍຊີວິດຫຼາຍກວ່າໝູ່ໃນໂລກ ກໍ່ຍັງແມ່ນ ສະຫະລັດອາເມລິກາ**,** ອິນເດຍ ແລະ ບຣາຊິວ.
- **ບັນດາປະເທດທີ່ມີຊາຍແດນຕິດຈອດກັບ ສປປ ລາວ**

- ປະເທດ ໄທ ມີຜູ້ຕິດເຊື້ອ **13,988** ແລະ ເສຍຊີວິດໃນມື້ດຽວ **187** ຄົນ, ຮອງລົງມາ ແມ່ນ ຫວຽດນາມມີລາຍງານຜູ້ຕິດເຊື້ອໃໝ່ປະຈຳວັນ **12,481** ຄົນ ແລະ ເສຍຊີວິດໃນມື້ດຽວ **311** ຄົນ.

## ບັນດາທ່ານທີ່ນັບຖື ແລະ ຮັກແພງທັງຫຼາຍ

- ບັນດາທ່ານທີ່ນັບຖື, ປັດຈຸບັນນີ້ຫຼາຍປະເທດໄດ້ມີການຄົ້ນຄ້ວານຳໃຊ້ຢາປິ່ນປົວ ເຊິ່ງໃນນັ້ນມີທັງຢາຫຼວງ ແລະ ຢາພື້ນເມືອງ, ແລະ ນະໂຍບາຍຂອງພັກກໍ່ຄືລັດຖະບານພວກເຮົາໄດ້ສົ່ງເສີມໃຫ້ນຳໃຊ້ຢາພື້ນເມືອງ ເຊິ່ງເປັນຊັບສົມບັດທຳມະຊາດອັນລ້ຳຄ່າຂອງປະເທດເຮົາ, ຄືດັ່ງທີ່ ທ່ານລັດຖະມົນຕີກະຊວງສາທາລະນະສຸກກໍ່ໄດ້ຊີ້ນຳໃຫ້ມີການຄົ້ນຄ້ວາ ແລະ ຜະລິດຈຳໜ່າຍຢາປ້ອງກັນ ແລະ ປິ່ນປົວພະຍາດໂຄວິດ-19, ດັ່ງນັ້ນ ສະຖາບັນການແພດ ແລະ ຢາພື້ນເມືອງໄດ້ຄົ້ນຄ້ວາ ແລະ ຜະລິດຢາ ຊະນິດແຄັບຊູນເປັນຕົ້ນແມ່ນ ລາຊາບີ, ຄາວທອງ ແລະ ກະຊາຍຂາວ.

ປັດຈຸບັນໄດ້ຈັດສົ່ງໃຫ້ບັນດາແຂວງທີ່ມີການລະບາດເປັນຕົ້ນແມ່ນແຂວງສະຫວັນນະເຂດ, ຈຳປາສັກ ແລະ ສາລະວັນ ເພື່ອປິ່ນປົວຄົນເຈັບຈຳນວນ 450 ຄົນ. ນອກຈາກນີ້ຍັງໄດ້ສົ່ງຢາພື້ນເມືອງທີ່ໄດ້ຮັບການຊ່ວຍເຫຼືອ ຈາກ ສປຈີນສົ່ງໃຫ້ບັນດາແຂວງທົ່ວປະເທດຈຳນວນໜຶ່ງ, ຢາພື້ນເມືອງດັ່ງກ່າວນີ້ແມ່ນມີຜົນດີໃນການປ້ອງກັນ ແລະ ປິ່ນປົວພະຍາດທາງລະບົບຫາຍໃຈກໍ່ຄືພະຍາດໂຄວິດ-19.

- ດັ່ງທີ່ພວກເຮົາຮູ້ກັນແລ້ວວ່າ ພະຍາດ ໂຄວິດ-19 ມີການພັດທະນາ ແລະ ປັບພັນທຸກຳໂຕເອງຂອງພວກມັນໄປເລື້ອຍໆ, ໃນວັນທີ 30 ສິງຫາ 2021 ທີ່ຜ່ານມາ ອົງການອະນາໄມໂລກ ໄດ້ອອກມາແຈ້ງວ່າສາຍພັນມູ (Mu) ລະຫັດ B.1.612 ເປັນສາຍພັນທີ່ໜ້າຈັບຕາເບິ່ງເປັນທີ່ສຸດ, ສາຍພັນນີ້ພົບຄັ້ງທຳອິດຢູ່ ປະເທດ ໂຄລຳເບຍ ໃນເດືອນ ມັງກອນ 2021 ແລະ ແຜ່ລະບາດໄປໃນຫຼາຍປະເທດຂອງ ທະວີບ ອາເມລິກາໃຕ້, ທະວີບຢູໂຣບ, ປະຈຸບັນ ສາຍພັນມູ ນີ້ ພົບໃນ

42 ປະເທດ ແລະ 49 ລັດ ຂອງສະຫາລັດອາເມລິກາ. ໃນ ສປປ ລາວ ຍັງບໍ່ທັນພົບສາຍພັນນີ້ ແຕ່ວ່າ ການເດີນທາງເຂົ້າອອກ ແມ່ນຕ້ອງໄດ້ເອົາໃຈໃສ່ເຝົ້າລະວັງຢ່າງໃກ້ຊິດ ແລະ ຕິດຕາມການເກີດລະບາດໃນທົ່ວໂລກ ເພື່ອຄວາມພ້ອມ ແລະ ປະເມີນສະຖານະການແລະ ກຽມພ້ອມຮັບມືໃນບ້ານເຮົາ.

- ການສັກວັນຊີນຍັງແມ່ນວິທີທາງທີ່ດີທີ່ສຸດເພື່ອປ້ອງກັນການເສຍຊີວິດ ສະນັ້ນ ແຈ້ງໃຫ້ທຸກທ່ານຈົ່ງພ້ອມໃຈກັນພາກັນໄປຮັບວັ້ກຊີນ ເພື່ອສ້າງພູມຄຸ້ມກັນໝູ່ໃຫ້ຫຼາຍທີ່ສຸດ, ມາຮອດປະຈຸບັນ ສປປ ລາວ ສັກວັກຊີນ <u>ເຂັມທີ 1</u> = 2,560,372 (34.89%) ແລະ <u>ທຸກເຂັມທີ່ແນະນຳ</u> = 1,842,398 (25.11%)

- ພັກ - ລັດຖະບານ ກໍ່ຄືຄະນະສະເພາະກິດ ທີ່ໄດ້ວາງມາດຕະການອອກ ແມ່ນເພື່ອຄວາມປອດໄພຂອງພໍ່ແມ່ປະຊາຊົນບັນດາເຜົ່າທຸກທົ່ວໜ້າ ສະນັ້ນທຸກຄົນຈົ່ງພ້ອມພຽງກັນ ຈັດຕັ້ງປະຕິບັດ

ໂດຍສະເພາະ ແມ່ນການຮັກສາໄລຍະຫ່າງ, ຫຼີກເວັ້ນການເດີນທາງໄປສະຖານທີ່ສ່ຽງ, ສະຖານທີ່ແອອັດ, ສະຖານທີ່ອາກາດບໍ່ຖ່າຍເທ. ບໍ່ໃຫ້ຊຸມແຊວເປັນກຸ່ມ, ໃສ່ຜ້າອັດປາກ-ດັງ, ລ້າງມືເລື້ອຍໆດ້ວຍສະບູ ແລະ ນ້ຳສະອາດ ຫຼື ເຈວລ້າງມືທີ່ມີທາດເຫຼົ້າ 70 ຂຶ້ນໄປ, ຮັກສາມາລະຍາດໃນການໄອ-ຈາມ ແລະ ທີ່ສຳຄັນທີ່ສຸດ ແມ່ນຄວາມຮ່ວມມືໃນການໃຫ້ຂໍ້ມູນຂ່າວສານ ແລະ ທາມລາຍ ທີ່ຖືກຕ້ອງ ເມື່ອພະນັກງານພາກສະໜາມສຳພາດ ເພາະມັນແມ່ນສິ່ງທີ່ສຳຄັນຫຼາຍ ເພື່ອຈະນຳພາໄປຫາການຊອກຫາກໍລະນີທີ່ຕິດເຊື້ອໃໝ່ໃຫ້ທັນເວລາ ແລະ ສາມາດຄວບຄຸມ ຂອບເຂດການລະບາດ ບໍ່ໃຫ້ແຜ່ອອກກ້ວາງ.

- ຂໍຮຽກຮ້ອງມາຍັງ ພໍ່ແມ່, ພີ່ນ້ອງ, ປະຊາຊົນ ແລະ ທຸກພາກສ່ວນໃນສັງຄົມ ຈົ່ງພ້ອມໃຈກັນປະຕິບັດການດຳລົງຊີວິດປົກກະຕິແບບໃໝ່ (new normal) ແລະ ພວກເຮົາທຸກຄົນ ຕ້ອງ

ຮ່ວມແຮງຮ່ວມໃຈ ແລະ ສາມັກຄີກັນ,  ເພື່ອພ້ອມກັນຜ່ານຜ່າວິກິດນີ້ໄປດ້ວຍກັນ ແລະ ສາມາດກັບມາດຳລົງຊີວິດປົກກະຕິໂດຍໄວ.

**ມາຮອດນີ້ ການລາຍງານສະພາບພະຍາດ ໂຄວິດ-19 ປະຈຳວັນ ອັງຄານ ວັນທີ 7 ກັນຍາ ປີ 2021 ຂອງຂ້າພະເຈົ້າ ໄດ້ສິ້ນສຸດພຽງເທົ່ານີ້. ຂໍສະແດງຄວາມຂອບໃຈມາຍັງບັນດາທ່ານທີ່ຕິດຕາມຊົມ ແລະ ຮັບຟັງ (ຂອບໃຈ)**